**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ
ທີ່ ແບກແລັງ

*Embassy of the Lao PDR*
*Bismarckallee 2A, 14193 Berlin*
*Tel: 030/89060647; Fax: 030/89060648*

# ລະບຽບການຂໍກັບຄືນເມືອຢູ່ລາວຢ່າງຖາວອນ

- **ຜູ້ທີ່ຈະຂໍເມືອຢູ່ລາວຢ່າງຖາວອນປະກອບເອກະສານດັ່ງນີ້:**

1. ໃບຄໍາຮ້ອງຂໍກັບເມືອຢູ ສ ປ ປ ລາວ ຢ່າງຖາວອນ (ຂຽນດ້ວຍຕົວເອງ).....................................1 ສະບັບ
2. ຊີວະປະຫວັດຂຽນດ້ວຍຕົວເອງ ( ນັບແຕ່ອາຍຸ 8 ປີ ມາເຖິງປະຈຸບັນ ແຕ່ລະປີເຮັດຫຍັງ ຊັ້ນໄດ ຮັບຜິດຊອບຫຍັງ ຕິດຮູບພ້ອມ )....................................................................................1 ສະບັບ
3. ສໍາເນົາຫນັງສືຜ່ານແດນ....................................................................................................1 ສະບັບ
4. ສໍາເນົາບັດປະຈໍາຕົວ.........................................................................................................1 ສະບັບ
5. ໃບແຈ້ງໂທດ...................................................................................................................1 ສະບັບ
6. ໃບຢັ້ງຢືນສຸຂະພາບ.........................................................................................................1 ສະບັບ
7. ໃບຢັ້ງຢືນການເກີດ.........................................................................................................1 ສະບັບ
8. ຮູບຂະຫນາດ 4x6 ...........................................................................................................5 ແຜ່ນ

- **ສໍາລັບຜູຮັບປະກັນ ( ຕ້ອງແມ່ນບຸກຄົນສັນຊາດລາວ ) ໃຫ້ປະກອບເອກະສານດັ່ງນີ້:**

1. ໃບຢັ້ງຢືນທີ່ຢູ່ຕິດຮູບພ້ອມ..................................................................................................3 ສະບັບ
2. ຮ່າງຊີວະປະຫວັດຫຍໍ້ທົ່ວໄປ................................................................................................3 ສະບັບ
3. ໃບຢັ້ງຢືນຮັບປະກັນ.........................................................................................................3 ສະບັບ
4. ສໍາເນົາບັດປະຈໍາຕົວ.........................................................................................................3 ສະບັບ
5. ສໍາເນົາສໍາມະໂນຄົວ.........................................................................................................2 ສະບັບ
6. ໃບສະເຫນີຈາກກອງບັນຊາການ ປກສ ນະຄອນຫຼວງ ຫລື ແຂວງ.............................................1 ສະບັບ
7. ໃບຄໍາຮ້ອງຂໍເອົາຍາດພີ່ນ້ອງມາຢູ່ລາວ ( ຂຽນດ້ວຍຕົວເອງ )...................................................1 ສະບັບ

- **ຂັ້ນຕອນການປະຕິບັດ:**

ຜູ້ທີ່ຈະເຂົ້າໄປຢູ່ ສ ປ ປ ລາວ ໃຫ້ປະກອບເອກະສານ ຜ່ານສະຖານທູດ ຫລື ສະຖານກົງສຸນ ທີ່ປະຈໍາຢູປະເທດຕົນເອງ ດໍາລົງຊີວິດຢູ່ ເມື່ອທູດມີຄໍາເຫັນແລ້ວ ຈະສົ່ງໄປກົມກົງສຸນ ກະຊວງການຕ່າງປະເທດ ທີ່ວຽງຈັນ. ຫລັງຈາກນັ້ນ ກົມກົງສຸນ ຈະມີຄວາມເຫັນ ແລ້ວສົ່ງໄປກົມຕໍາຫລວດກວດຄົນເຂົ້າ- ອອກເມືອງ ແລະຄຸ້ມຄອງຄົນຕ່າງປະເທດ ຂອງກະຊວງປ້ອງກັນຄວາມສະຫງົບ ພ້ອມກັບສໍານວນ ຂອງ ຜູ້ຮັບປະກັນໄປພ້ອມ.

ຜູຮັບປະກັນ ໃຫ້ປະກອບເອກະສານ ຜ່ານອໍານາດການປົກຄອງ, ເມື່ອຮອດ ປກສ ນະຄອນຫຼວງ ຫລື ແຂວງ ແລ້ວສົ່ງໄປ ກົມກົງສຸນກະຊວງການຕ່າງປະເທດ.

**<u>ຫມາຍເຫດ:</u>** ສໍາລັບຜູຂໍເມືອລາວນັ້ນ ເອກະສານໃດ ທີ່ເປັນພາສາຕ່າງປະເທດ ຂໍໃຫ້ແປເປັນພາສາລາວກ່ອນ ແລ້ວຈຶ່ງສົ່ງໄປຍັງສະຖານທູດ ຫລື ສະຖານກົງສຸນ ເພື່ອຫລີກລ້ຽງການເສຍເວລາ ກໍ່ຄືອໍານວຍຄວາມສະດວກແກ່ເຈົ້າຫນ້າທີ່ໃນການພິຈາລະນາ.